ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ທຫລ ສຳເລັດການເປັນເຈົ້າພາບ ແລະ ປະທານຮ່ວມກອງປະຊຸມລະດັບຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ ASEAN Finance and Central Bank Deputies' Meeting (AFCDM), ທີ່ ນະຄອນຫຼວງພະບາງ, ສປປ ລາວ




ສປປ ລາວ ສຳເລັດການເປັນເຈົ້າພາບ ແລະ ປະທານຮ່ວມກອງປະຊຸມລະດັບຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ ASEAN Finance and Central Bank Deputies' Meeting (AFCDM). ພ້ອມດຽວກັນນັ້ນ, ທຫລ ສຳເລັດການເປັນເຈົ້າພາບ ແລະ ປະທານຮ່ວມກອງປະຊຸມລະດັບຮອງຜູ້ວ່າການທະນາຄານອາຊຽນ ASEAN Central Bank Deputies' Meeting (ACDM), ທີ່ ນະຄອນຫຼວງພະບາງ.

ໃນວັນທີ 02 ເມສາ 2024, ຄະນະນຳຂອງ ກະຊວງການເງິນ ສປປ ລາວ ນຳໂດຍ ທ່ານ ປອ. ພູທະນູເພັດ ໄຊສົມບັດ, ຮອງລັດຖະມົນຕີກະຊວງການເງິນ ແລະ ການນຳຂອງ ທຫລ ນຳໂດຍ ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ). ເຂົ້າຮ່ວມໂດຍບັນດາຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ ພ້ອມດ້ວຍຄະນະ, ປະເທດ ຕີມໍ ເລສເຕ ໃນນາມຜູ້ສັງເກດການ ແລະ ກອງເລຂາອາຊຽນ (ASEC).

ພາຍໃຕ້ການເປັນປະທານອາຊຽນຂອງ ສປປ ລາວ ໃນປີ 2024 ນີ້ ທີ່ຕິດພັນກັບຂະແໜງການເງິນ ໄດ້ຮັບຮອງແຜນວຽກບູລິມະສິດດ້ານເສດຖະກິດຂອງອາຊຽນ (PED) ເພື່ອນຳສະເໜີໃຫ້ບັນດາປະເທດສະມາຊິກອາຊຽນຮັບຊາບ ໂດຍໄດ້ກຳນົດເອົາ 03 ແຜນຍຸດທະສາດຫຼັກປະກອບມີ: ການເຊື່ອມໂຍງ ແລະ ການເຊື່ອມຈອດດ້ານເສດຖະກິດ, ການສ້າງອະນາຄົດແບບຍືນຍົງ ແລະ ທຸກພາກສ່ວນມີສ່ວນຮ່ວມ, ແລະ ການຫັນປ່ຽນເພື່ອກ້າວໄປສູ່ດີຈິຕອລໃນອະນາຄົດ. ອີງໃສ່ແຜນຍຸດທະສາດດັ່ງກ່າວ, ຂະແໜງການທະນາຄານໄດ້ສຸມໃສ່ "ການແກ້ໄຂຄວາມຫຼູດໂຕນການເຂົ້າເຖິງແຫຼ່ງທຶນ ແລະ ການເສີມສ້າງໃຫ້ເຂົ້າເຖິງການບໍລິການທາງການເງິນ ໃນກຸ່ມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ" ເພື່ອເພີ່ມທະວີຄວາມເຂັ້ມແຂງທາງດ້ານການເງິນໃນພາກພື້ນ ແລະ ແຜນວຽກ LCT Framework ໃນກອງປະຊຸມ ACDM.




ນອກຈາກນັ້ນ, ໃນກອງປະຊຸມ AFCDM ໄດ້ຮັບຊາບຄວາມຄືບໜ້າ ແລະ ແຜນການຈັດຕັ້ງປະຕິບັດຕາມບົດລາຍງານຂອງຄະນະກຳມະການທັງໝົດ (Working Committees) ຊຶ່ງໄດ້ເນັ້ນໜັກເຖິງຄວາມພະຍາຍາມຂອງອາຊຽນໃນການຊຸກຍູ້ໃຫ້ວຽກງານການເງິນ-ທະນາຄານ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຊື່ອມໂຍງເຂົ້າກັນຫຼາຍຂຶ້ນໃນທ່າມກາງສະພາບການເໜັງຕີງ ແລະ ຄວາມບໍ່ແນ່ນອນຂອງການເງິນໃນໂລກ.

ພ້ອມດຽວກັນນີ້, ບັນດາທ່ານຮອງຜູ້ວ່າການ ແລະ ຜູ້ຕາງໜ້າຈາກທະນາຄານກາງ 10 ປະເທດອາຊຽນ ໄດ້ເຫັນດີຮ່ວມກັນໃນການຮັບຮອງຜົນສຳເລັດບັນດາຫນ້າວຽກຕົ້ນຕໍຂອງຄະນະກຳມະການເຊື່ອມໂຍງການເງິນອາຊຽນ ລວມທັງທິດທາງແຜນການໃນຕໍ່ຫນ້າໂດຍສະເພາະແມ່ນ ວຽກງານການສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນໃນພາກພື້ນ,

ການທົບທວນບັນດາໜ້າວຽກຕົ້ນຕໍຂອງຄະນະກຳມະການເພື່ອໃຫ້ສອດຄ່ອງຕາມແຜນປະຊາສະມາຄົມເສດຖະກິດອາຊຽນ ປີ 2025 (AEC Post 2025).

ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນເຊິ່ງແບ່ງອອກເປັນພາກເຊົ້າແມ່ນກອງປະຊຸມສະເພາະຮອງຜູ້ວ່າການທະນາຄານກາງອາຊຽນ ແລະ ພາກບ່າຍແມ່ນຮ່ວມກັນລະຫວ່າງ ຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍຜົນສຳເລັດ. ໃນທ້າຍກອງປະຊຸມ, ທ່ານ ຮອງຜູ້ວ່າການ ທຫລ ໄດ້ສະແດງຄວາມຂອບໃຈມາຍັງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜຸນ ສປປ ລາວ ໃນນາມ ປະທານອາຊຽນ ປີ 2024 ນີ້ຢ່າງແໜ້ນແຟ້ນ.